# ບົດຂ່າວ

## ພິທີເຊັນສັນຍາ ໂຄງການປະເມີນຄວາມພ້ອມຕາມຫຼັກການບາເຊວ 2 ໃຫ້ກັບ ທຄຕລ ລະຫວ່າງ ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ແລະ ບໍລິສັດ ເອີນ ແອນ ຢັງ ລາວ ຈຳກັດ.

24/10/2016








ໃນວັນທີ 24 ຕຸລາ 2016 ທີ່ຜ່ານມາ, ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ແລະ ບໍລິສັດ ເອີນ ແອນ ຢັງ ລາວ ຈຳກັດ ໄດ້ຈັດພິທີເຊັນສັນຍາຮ່ວມກັນເພື່ອດຳເນີນການປະຕິບັດ "ໂຄງການປະເມີນຄວາມພ້ອມຕາມຫຼັກການບາເຊວ 2 ໃຫ້ແກ່ ທຄຕລ" ພາຍໃຕ້ການເປັນບໍລິສັດທີ່ປຶກສາໂດຍ ບໍລິສັດ ເອີນ ແອນ ຢັງ ລາວ ຈຳກັດ.

ການລົງນາມໃນຄັ້ງນີ້ ແມ່ນລົງນາມໂດຍ:

- **ທ່ານ ພູຂົງ ຈັນທະຈັກ, ຜູ້ອຳນວຍການໃຫຍ່, ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ແລະ**
- **ທ່ານ ນາງ ເດືອງ ທາງງຽນ, ຜູ້ບໍລິຫານທີ່ເປັນຮຸ້ນສ່ວນ ໃນຂົງເຂດປະເທດລາວ, ກຳປູເຈ້ຍ ແລະ ຫວຽດນາມ, ບໍລິສັດ ເອີນ ແອນ ຢັງ ລາວ ຈຳກັດ.**

ໃຫ້ກຽດເຂົ້າຮ່ວມເປັນສັກຂີພະຍານໃນພິທີລົງນາມໃນຄັ້ງນີ້ ປະກອບມີ:

**1. ທ່ານ ສອນໄຊ ສິດພະໄຊ, ຮອງຜູ້ວ່າການ ທະນາຄານແຫ່ງ ສ.ປ.ປ ລາວ**

**2. ທ່ານ ດຣ ບຸນເຫລືອ ສິນໄຊວໍຣະວົງ, ປະທານສະພາບໍລິຫານ ທຄຕລ ແລະ ທັງເປັນ ຫົວໜ້າກົມນະໂຍບາຍການເງິນ, ກະຊວງການເງິນ**

**3. ທ່ານ ວັນຄຳ ວໍຣະວົງ, CEO ຕະຫລາດຫຼັກຊັບລາວ**

**4. ທ່ານ ນາງ ໂພທິຈັນ ທຳມະເທວາ, ຮອງຫົວໜ້າກົມ ຄຸ້ມຄອງ ທະນາຄານທຸລະກິດ**

**5. ທ່ານ ຄຳແກ້ວ ວິສີສົມບັດ, ຮອງຫົວໜ້າສຳນັກງານຄຸ້ມຄອງຕະຫລາດຫຼັກຊັບລາວ**

**6. ທ່ານ ແອງ ທວາງ ທິນ, ຮຸ້ນສ່ວນ ຂອງ ບໍລິສັດ ເອີນ ແອນ ຢັງ ລາວ ຈຳກັດ**

**ພ້ອມຄະນະຄ້ອຍ ຄະນະອຳນວຍການ, ຄະນະພະແນກ, ຄະນະສາຂາ , ແລະ ວິຊາການຂອງ ທຄຕລ.**

ສັນຍາໂຄງການປະເມີນຄວາມພ້ອມຕາມຫຼັກການບາເຊວ 2 ໃຫ້ແກ່ ທຄຕລ ແມ່ນຈະດຳເນີນເປັນເວລາ 12 ເດືອນຫຼັງຈາກເຊັນສັນຍາ. ໂຄງການດັ່ງກ່າວແມ່ນຈະກວມເອົາຫລາຍໜ້າວຽກທີ່ຕິດພັນກັບການສ້າງຄວາມອາດສາມາດໃຫ້ແກ່ ທຄຕລ ເພື່ອກະກຽມຮັບເອົາມາດຕະຖານ ບາເຊວ 2 ມາຈັດຕັ້ງປະຕິບັດເຊັ່ນ: ດ້ານການປະເມີນສະຖານະຄວາມພ້ອມຂອງ ທຄຕລ, ປະເມີນ ແລະ ສ້າງຄວາມພ້ອມດ້ານລະບຽບຫຼັກການ, ການປະເມີນຄວາມສ່ຽງ, ການຈັດການຝຶກອົບຮົມດ້ານວິຊາການໃຫ້ແກ່ພະນັກງານ ທຄຕລ ແລະ ອື່ນໆ.

ທ່ານ ພູຊົງ ຈັນທະຈັກ, ຜູ້ອຳນວຍການໃຫຍ່, ທະນາຄານການຄ້າຕ່າງປະເທດລາວ ມະຫາຊົນ ໄດ້ກ່າວໃນພິທີເຊັນສັນຍາວ່າ: "ການຕັດສິນໃຈຍົກລະດັບການນຳໃຊ້ຫຼັກການບາເຊວ ຂອງ ທຄຕລ ຈາກ ບາເຊວ 1 ມາເປັນ ບາເຊວ 2 ແມ່ນເປັນຂີດໝາຍອັນສຳຄັນຂອງ ທຄຕລ ແລະ ເປັນການຍົກລະດັບ ຂອງ ທຄຕລ ໄປສູ່ສາກົນເທື່ອລະກ້າວ. ການນຳໃຊ້ຫຼັກການ ບາເຊວ 2 ຂອງ ທຄຕລ ແມ່ນຈະນຳເອົາຂໍ້ດີຫລາຍຢ່າງມາສູ່ທະນາຄານຄື:

- ທຄຕລ ຈະມີການຄຸ້ມຄອງລະດັບຄວາມພຽງພໍຂອງທຶນ ໃຫ້ສາມາດຢູ່ໃນເກນມາດຖານຂອງສາກົນທີ່ສູງຂຶ້ນທັງນີ້ເພື່ອປ້ອງກັນຈາກສະພາວະການຂາດສະພາບຄ່ອງ ແລະ ສ້າງຄວາມໜ້າເຊື່ອຖືໃຫ້ແກ່ສະຖານະການເງິນຂອງ ທຄຕລ.
- ທຄຕລ ຈະໄດ້ມີການເອົາໃຈໃສ່ໃນການສຶກສາຄວາມສ່ຽງດ້ານຕ່າງໆໃນການດຳເນີນທຸລະກິດເພື່ອໃຫ້ທະນາຄານສາມາດດຳເນີນງານໃຫ້ມີປະສິດທິຜົນສູງສຸດ ແລະ ສາມາດຫລຸດຜ່ອນຄວາມສ່ຽງໄດ້.
- ກ້າວໄປສູ່ລະດັບມາດຕະຖານສາກົນເພື່ອກຽມຄວາມພ້ອມໃນການເຊື່ອມໂຍງຂອງປະຊາຄົມເສດຖະກິດອາຊຽນ.

ຕາມວິໄສທັດຂອງ ທຄຕລ ກໍ່ຄື: " ເປັນທະນາຄານທີ່ເຂັ້ມແຂງ ທັນສະໄໝ ກ້າວສູ່ມາດຕະຖານສາກົນ"

ພ້ອມກັນນີ້ໃນພິທີ, ທ່ານ ນາງ ເດືອງ ຫງຽນ, ຜູ້ບໍລິຫານທີ່ເປັນຮຸ້ນສ່ວນໃນຂົງເຂດປະເທດລາວ, ກຳປູເຈຍ ແລະ ຫວຽດນາມ, ບໍລິສັດ ເອີນ ແອນ ຢັງ ລາວ ຈຳກັດ ໄດ້ສະແດງຄວາມຍິນດີກັບ ທຄຕລ ໃນການຈັດຕັ້ງປະຕິບັດໂຄງການນີ້ ແລະ ທ່ານຍັງໄດ້ໃຫ້ຄຳເຫັນເພີ່ມຕື່ມວ່າ ຫຼັກການບາເຊວແມ່ນໄດ້ຖືວ່າເປັນມາດຕະຖານທອງຄຳສຳລັບລະບຽບການດ້ານທຶນໃນຂະແໜງການທະນາຄານ, ເຊິ່ງຫຼັກການ ບາເຊວ 2 ຈະຊ່ວຍໃນການຮັບຮູ້ ແລະ ຊຸກຍູ້ໃຫ້ແກ່ການບໍລິຫານຄວາມສ່ຽງ ແລະ ວິທີການຄຸ້ມຄອງທະນາຄານ. ທ່ານ ນາງ ເດືອງ ເຊື່ອວ່າ ດ້ວຍປະສົບການອັນຫລວງຫລາຍທີ່ບໍລິສັດ ເອີນ ແອນ ຢັງ ມີໃນການເປັນທີ່ປຶກສາດ້ານຫຼັກການ ບາເຊວ 2 ທີ່ໄດ້ເຄີຍນຳພາທະນາຄານທີ່ປະເທດຫວຽດນາມເຊັ່ນ: ທະນາຄານຫວຽດຄອມ, ທະນາຄານເທັກຄອມ ແລະ ລວມທັງທະນາຄານແຫ່ງ ສ.ປ.ປ ລາວ ແລະ ອີກຫຼາຍໆທະນາຄານໃນເຂດພາກພື້ນລວມທັງມີຄວາມພະຍາຍາມ ແລະ ການຮ່ວມມືຈາກ ທຄຕລ, ໂຄງການດັ່ງກ່າວແມ່ນຈະດຳເນີນໄປຢ່າງມີປະສິດທິພາບ.

ຫຼັກການ ບາເຊວ ແມ່ນເປັນລະບຽບຫຼັກການທະນາຄານຂອງສາກົນ ທີ່ໄດ້ມີການກຳນົດຂຶ້ນນັບແຕ່ປີ 1988. ຈຸດປະສົງແມ່ນເພື່ອຄຸ້ມຄອງບັນດາທະນາຄານໃຫ້ມີຄວາມເຂັ້ມແຂງ. ຕາມຫຼັກການບາເຊວ 1 ມີການກຳນົດອັດຕາຄວາມພຽງພໍຂອງທຶນຢູ່ໃນລະດັບ 8%, ເພື່ອຮັບປະກັນສະເຖຍລະພາບຂອງບັນດາທະນາຄານໃນກໍລະນີຫາກເກີດການຂາດສະພາບຄ່ອງ ແລະ ພາຫວະສຸກເສີນຕ່າງໆ. ສຳລັບ ທຄຕລ ໄດ້ນຳໃຊ້ຫຼັກການບາເຊວ 1 ມາແຕ່ປີ 2008 ເພື່ອໃຫ້ທະນາຄານສາມາດໄດ້ຮັບມາດຕະຖານສາກົນ.

ຫຼັງຈາກເກີດວິກິດການທາງການເງິນປີ 2007, ຄະນະກຳມະການຄົ້ນຄ້ວາກ່ຽວກັບການກຳນົດຫຼັກການບາເຊວ ກໍ່ເຫັນໄດ້ວ່າ ບາເຊວ 1 ແມ່ນມີຫລາຍຈຸດທີ່ຈະຕ້ອງໄດ້ຮັບການປັບປຸງ ເພື່ອໃຫ້ແທດເໝາະກັບສະພາບທະນາຄານໃນຍຸກໃໝ່ທີ່ມີການພັດທະນາດ້ານເຕັກໂນໂລຍີດ້ານການທະນາຄານທີ່ມີຄວາມທັນສະໄໝ ແລະ ຮູບແບບການລົງທຶນແບບໃໝ່ຫລາຍຂຶ້ນເຊິ່ງກໍ່ເຮັດໃຫ້ຄວາມສ່ຽງໃນທຸລະກຳທະນາຄານກໍ່ໄດ້ເພີ່ມຂຶ້ນເຊັ່ນກັນ ຈຶ່ງເຮັດໃຫ້ມີຄວາມຈຳເປັນທີ່ຕ້ອງໄດ້ຄຳນຶງເຖິງຄວາມສ່ຽງໃນການວິເຄາະສະເຖຍລະພາບຂອງທະນາຄານ. ດັ່ງນັ້ນ, ຈຶ່ງໄດ້ມີການອອກຫຼັກການ ບາເຊວ 2 ໃນປີ 2008

ທີ່ປະກອບມີ 3 ເສົາຄ້ຳຫຼັກຄື: 1. ຄວາມຕ້ອງການເງິນທຶນຂັ້ນຕ່ຳ, 2. ການດຳເນີນການກວດຄືນ ແລະ 3. ການເປີດເຜີຍຂໍ້ມູນສູ່ສາທາລະນະ.

ສຳລັບ ສ.ປ.ປ ລາວ, ທະນາຄານແຫ່ງ ສ.ປ.ປ ລາວ ແມ່ນໄດ້ເລີ່ມມີການສຶກສາ ແລະ ກະກຽມການນຳໃຊ້ຫຼັກການບາເຊວ 2 ເຊິ່ງເປັນແຜນການພັດທະນາຂະແໜງການເງິນຂອງລາວທີ່ໄດ້ວາງອອກເປັນແຜນໄລຍະຍາວໃຫ້ສຳເລັດແຕ່ປີ 2009-2020 ໂດຍການປັບປຸງກົນໄກທາງດ້ານກົດໝາຍໃນການຄຸ້ມຄອງທະນາຄານທຸລະກິດໃຫ້ໄດ້ຕາມມາດຕະຖານຂອງບາເຊວ 2. ຈຸດປະສົງຂອງການນຳໃຊ້ຫຼັກການ ບາເຊວ 2 ແມ່ນເພື່ອສ້າງຄວາມເຂັ້ມແຂງ ແລະ ມີສະເຖຍລະພາບໃຫ້ແກ່ລະບົບທະນາຄານລາວ ແລະ ກ້າວໄປເຖິງການກຽມພ້ອມຕໍ່ການເຊື່ອມໂຍງກັບພາກພື້ນໂດຍສະເພາະແມ່ນປະຊາຄົມເສດຖະກິດອາຊຽນ ແລະ ສາກົນ.